ອົງການສະຫະປະຊາຊາດ A/HRC/23/48/Add.4

ສະມັດຊາໃຫ່ຍ

Distr.: General
4 March 2013

Original: English

ຄະນະກຳມະການ ເພື່ອສິດທິມະນຸດ
ຫົວຂໍ້ທີ 23
ວາລະກອງປະຊຸມ ລາຍການທີ 3
ຄະນະກຳມະການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ
ສິດທິທາງດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນາທຳ,
ລວມທັງສິດໃນການພັດທະນາ

## ບົດລາຍງານພາກພິເສດ ການກະເສດ ( ປູກພືດຜັກ) ກັບການຄ້າມະນຸດ, ໂດຍ ສະເພາະແມ່ນໃນແມ່ຍິງ ແລະ ເດັກນ້ອຍ, ໂດຍ Joy Ngozi Ezeilo

**Addendum**

# ຂໍ້ມູນເພີ່ມເຕີມ: Appendix I

## ມາດຕະຖານ ແລະ ຕົວຊີ້ວັດ ເພື່ອໃຫ້ຮັບປະກັນວ່າຕ່ອງໂສ່ຕ່າງໆຂອງການ ສະໜອງປອດ (ບໍ່ມີ) ການຄ້າມະນຸດ

### ເພື່ອສົນທະນາໃນກອງປະຊຸມຊ່ຽວຊານ ໂດຍເຈາະຈົງໃສ່ການກະເສດ ປູກພືດຜັກ ກັບການຄ້າ ມະນຸດ, ໂດຍສະເພາະແມ່ນໃນແມ່ຍິງ ແລະ ເດັກນ້ອຍ.

### ການຮັບສະມັກແບບສະມັກໃຈ ແລະ ການຈ້າງງານ

1. ຜູ້ອອກແຮງງານທຸກຄົນແມ່ນເຮັດວຽກແບບສະມັກໃຈບໍ ແລະ ຜູ້ອອກແຮງງານດັ່ງກ່າວມີສິດ ເສລີພາບໃນການຢຸດຕິການຈ້າງງານ ດ້ວຍເຫດຜົນ ແລະ ການແຈ້ງລ່ວງໜ້າທີ່ເໝາະສົມ, ໄດ້ທຸກ ເວລາໂດຍບໍ່ມີການປັບໄໝລົງໂທດບໍ?.

### ຄ່າທຳນຽມຮັບສະມັກ Recruitment fees

2. ຜູ້ອອກແຮງງານທຸກຄົນຕ້ອງເສຍຄ່າຮັບສະມັກບໍ ? ລວມທັງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເດີນທາງ ແລະ ກະກຽມເອກະສານທາງການຕ່າງໆ ?.



Please recycle

3. ຜູ້ອອກແຮງງານທຸກຄົນຖືກຮຽກຮ້ອງໃຫ້ຕ້ອງມີເງິນຄ້ຳປະກັນ ຫຼື ການຈ່າຍຄ້ຳ ປະກັນອື່ນໆ ທີ່ບໍ່ແມ່ນເງິນ.

## ສັນຍາຂອງການຈ້າງງານ Contracts of employment

4. ຜູ້ອອກແຮງງານທຸກຄົນໄດ້ຮັບການແນະນຳໂດຍຫຍໍ້ ໃນພາສາທີ່ພວກເຂົາຟັງແລ້ວເຂົ້າໃຈບໍ ກ່ຽວກັບເງື່ອນໄຂ ແລະ ສະພາບການຕ່າງໆຂອງການຈ້າງງານຂອງເຂົາເຈົ້າ, ລວມທັງທັກສະຄວາມສາມາດທີ່ຕ້ອງການ ?

5. ສັນຍາການຈ້າງງານທີ່ຮ່າງຂຶ້ນກ່ຽວຂ້ອງກັບກົດໝາຍ ທີ່ເອົາໃຫ້ຜູ້ອອກແຮງງານນັ້ນ ເປັນພາສາຂອງເຂົາເຈົ້າເອງ ທີ່ເຂົາສາມາດອ່ານອອກ ແລະ ເຂົ້າໃຈບໍ, ສິດທິຕ່າງໆ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າໄດ້ລະບຸແຈ້ງ ແລະ ເໝາະສົມກັບຄ່າຈ້າງ, ຊົ່ວໂມງເຮັດວຽກ, ການຫັກຄ່າໃຊ້ຈ່າຍ ແລະ ເງື່ອນໄຂການເຮັດວຽກອື່ນໆບໍ ?.

6. ບາງກໍລະນີຜູ້ອອກແຮງງານບໍ່ສາມາດ ອ່ານອອກ ຫຼື ຂຽນໄດ້, ມັນຕ້ອງມີມາດ ຖານໃນການວັດແທກທີ່ເໝາະສົມ ເພື່ອໃຫ້ແນ່ໃຈວ່າພວກເຂົາເຂົ້າໃຈ ແລະ ຕົກລົງເຫັນດີໃນແຕ່ລະຂໍ້ທີ່ກຳນົດໃນສັນຍາບໍ່ ?.

7. ແຮງງານເຄື່ອນຍ້າຍສ່ວນຫຼາຍໄດ້ຮັບສັນຍາການຈ້າງງານຂອງພວກເຂົາ ຕັ້ງແຕ່ໄລຍະທຳອິດຂອງການເຂົ້າມາປຶກສາບໍ, ມີການຮ່າງຂໍ້ຕົກລົງ ຫຼື ແຜນສຳລັບການຈ້າງງານໄວ້ກ່ອນແລ້ວບໍ ?.

8. ທ່ານໄດ້ມີການຫ້າມການເພີ່ມຂໍ້ຕົກລົງ ແລະ ການປະຕິບັດສັນຍາຈາກການປ່ຽນແທນບໍ ( ປ່ຽນຄືນ) ?.

9. ບໍ່ມີການອະນຸຍາດໃຫ້ມີການປ່ຽນແປງສັນຍາການຈ້າງງານເພີ່ມບໍ ເຊັ່ນການຫຼຸດຄ່າແຮງງານ, ຜົນປະໂຫຍດອື່ນໆ ຫຼື ເງື່ອນໄຂຕ່າງໆຂອງການເຮັດວຽກ ?.

10. ທ່ານໄດ້ມີການກວດກາຕິດຕາມ ຜູ້ຮັບເໝົາສັນຍາຍ່ອຍ ແລະ ຂໍ້ຕົກລົງທີ່ເຂົາເຈົ້າມີກັບກຳລັງແຮງງານ( ຜູ້ອອກແຮງງານ) ຂອງເຂົາເຈົ້າບໍ ?.

## ການຍຶດເອກະສານເດີນທາງ ( ປັດສະປໍ ) Passport confiscation

11. ມີການຍຶດ ຫຼື ຫ້າມຜູ້ອອກແຮງງານເກັບຮັກສາ ເອກະສານເດີນທາງ ( ເຊັ່ນ: ປັດສະປໍ, ບັດປະຈຳຕົວ ແລະ ເອກະສານອື່ນໆ ທີ່ສຳຄັນ) ບໍ ?.

12. ປົກກະຕິແລ້ວ ນາຍຈ້າງ(ຜູ້ໃຊ້ແຮງງານ) ເອົາເອກະສານສຳຄັນຂອງລູກຈ້າງ (ຜູ້ອອກແຮງງານ) ໄປໄວ້ໃສ, ເຫດຜົນທາງດ້ານກົດໝາຍບໍ ?. ລູກຈ້າງ (ຜູ້ອອກແຮງງານ) ສາມາດຂໍເອົາເອກະສານ (ລວມທັງເອກະສານເດີນທາງ, ບັດປະຈຳຕົວ, ເອກະສານທີ່ກ່ຽວຂ້ອງກັບການເຮັດວຽກ) ຂອງພວກເຂົາໄດ້ທຸກເວລາໃນເວລາຕາມທີ່ເຂົາຕ້ອງການບໍ ?.

**ການປິ່ນປົວ ໃນເວລາເຈັບເປັນ** Humane treatment

13. ມີການນຳໃຊ້ ຫຼື ຂົ່ມຂູ່ທາງຮ່າງກາຍ ແລະ ຄວາມຮຸນແຮງທາງເພດ, ການກໍ່ກວນ ແລະ ການຫ້າມໂດຍເດັດຂາດ ແລະ ການລົງໂທດ ບໍ ?.

14. ມີວິທີການແກ້ໄຂທີ່ມີປະສິດພາບບໍ ຖ້າເຫດການດັ່ງກ່າວເກີດຂື້ນຢູ່ໃນສະຖານທີ່ເຮັດວຽກຂອງທ່ານ ?.

**ຄວາມສະເໝີພາບໃນການເຮັດວຽກ** Equality at work

15. ຜູ້ອອກແຮງງານ ໄດ້ຮັບການປະຕິບັດຢ່າງເປັນທຳ ແລະ ມີຄວາມສະເໝີພາບບໍ, ເຊີ່ງບໍ່ມີການຈຳແນກ ກ່ຽວກັບເພດ, ຜູ້ຍິງ-ຜູ້ຊາຍ, ສັນຊາດ, ຊົນຊາດຊົນເຜົ່າ, ຜູ້ເປັນສຳມະຊິກຂອງອົງການຈັດຕັ້ງກຳມະບານ, ນັກການເມືອງ, ຄວາມເຊື່ອ/ສາດສະໜາ, ຜູ້ມັກເພດດຽວກັນ, ຜູ້ພິການ, ຜູ້ມີສັນຊາດ

**ຄ່າຈ້າງແຮງງານ ແລະ ຜົນປະໂຫຍດອື່ນໆ** Wages and benefits

16. ຜູ້ອອກແຮງງານ ຖືກຜູກມັດດ້ວຍໜີ້ສິນ ຫຼື ບັງຄັບໃຫ້ເຮັດວຽກໃຊ້ໜີ້ຕ່າງໆ, ລວມທັງໜີ້ທີ່ບໍ່ແມ່ນເງີນ ( ເຊັ່ນ: ການໃຫ້ການຊ່ວຍເຫຼືອ ດ້ານເຄື່ອງມືອຸປະກອນ ຫຼື ການຝຶກອົບຮົມ, ຮ່ຳຮຽນຕ່າງໆ ) ບໍ ?.

17. ຜູ້ອອກແຮງງານໄດ້ຈ່າຍເງິນໃນການຈ້າງຂຽນເອກະສານທາງດ້ານກົດໝາຍຕ່າງໆ, ລາຍການໃບເບີກຈ່າຍ, ໃບຮັບເງີນ ໃນພາສາທີ່ເຂົາເຈົ້າເຂົ້າໃຈ ລວມທັງອັດຕາຄ່າແຮງງານ, ຊົ່ວໂມງເຮັດວຽກ, ລາຍຈ່າຍທັງໝົດ ແລະ ການຫັກຄ່າການອະນຸຍາດຕາມກົດໝາຍ ທີ່ເສຍໃຫ້ໂດຍນາຍຈ້າງ ບໍ ?

18. ຜູ້ອອກແຮງງານຢ່າງໜ້ອຍ ໄດ້ຮັບຄ່າຈ້າງແຮງງານຂັ້ນຕ່ຳ ແລະ ຜົນປະໂຫຍດ ຕ່າງໆ ຕາມກົດໝາຍກຳນົດບໍ ?

19. ນາຍຈ້າງ ( ຜູ້ໃຊ້ແຮງງານ) ໄດ້ຈ່າຍຄ່າແຮງງານເປັນປົກກະຕິ, ຈ່າຍໂດຍກົງ ຫຼື ຈ່າຍໂອນເຂົ້າບັນຊີ ຂອງລູກຈ້າງ( ຜູ້ອອກແຮງງານ) ຢ່າງເປັນປົກປະຕິບໍ ແລະ ບໍ່ມີການຊັກຊ້າ, ເລື່ອນ ຫຼື ງົດບໍ່ຈ່າຍ ບໍ ?.

20. ມີການຫັກເງີນຄ່າຈ້າງແຮງງານຖືກຕ້ອງຕາມການກຳນົດໃນກົດໝາຍ, ໄດ້ຮັບອະນຸຍາດ ແລະ ບໍ່ຫຼາຍເກີນໄປ ມີບໍ ?.

21. ມີການຈ່າຍເງີນລ່ວງໜ້າ ຫຼື ໃຫ້ສິນເຊື່ອກັບລູກຈ້າງ (ຜູ້ອອກແຮງງານ), ລວມທັງອັດຕາດອກເບ້ຍ ແລະ ເງື່ອນໄຂການຈ່າຍເງີນຄືນໃຊ້ໜີ້ ຕາມກົດໝາຍ, ການໃຫ້ຄຳແນະນຳກັບລູກຈ້າງ ( ຜູ້ອອກແຮງງານ) ໃນພາສາຂອງເຂົາເຈົ້າເອງ ແລະ ທັງສອງຝ່າຍຕົກລົງກັນລ່ວງໜ້າ ມີບໍ ?.

22. ລູກຈ້າງ( ຜູ້ອອກແຮງງານ) ຖືກກັກຂັງ, ແລະ ຄອບຄຸມລາຍຮັບ(ເງິນຄ່າແຮງງານ) ຂອງພວກເຂົາບໍ ແລະ ພວກເຂົາມີສິດເສລີພາບ ໃນການໃຊ້ຈ່າຍເງິນຂອງຕົນເອງຕາມການຕັດສິນໃຈຂອງຕົນເອງບໍ ?.

### ສິດເສລີພາບ ໃນການເຄື່ອນໄຫວ ໄປ-ມາ Freedom of movement

23. ລູກຈ້າງ( ຜູ້ອອກແຮງງານ) ຖືກຈຳກັດຂອບເຂດຂອງການເຄື່ອນໄຫວໄປສະຖານທີ່ເຮັດວຽກ ຫຼື ພວກເຂົາປະເຊີນກັບຂໍ້ຈຳກັດຕ່າງໆ ( ລວມທັງການຂົ່ມຂູ່ທາງດ້ານຈິດຕະວິທະຍາ ແລະ ວາຈາ ) ກ່ຽວກັບເສລີພາບໃນການເຄື່ອນໄຫວ ນອກໂມງເຮັດວຽກ ຫຼື ສະຖານທີ່ ທີ່ກ່ຽວຂ້ອງເຊັ່ນ ຫໍພັກ ແລະ ສະຖານທີ່ພັກອາໃສ ບໍ

### ສິດເສລີພາບໃນສັງຄົມ ແລະການເຈລະຈາຕໍ່ລອງ Freedom of association and collective bargaining

24. ລູກຈ້າງ( ຜູ້ອອກແຮງງານ) ໄດ້ຮັບການເຄົາລົບໃນສັນຊາດ ຫຼື ສະຖານະພາບທີ່ພັກອາໃສ, ພວກເຂົາມີສິດທີ່ຈະເຂົ້າຮ່ວມ ສະຫະພາບ/ສາມະຄົມຕ່າງໆ ແລະ ເຈລະຈາຕໍ່ລອງ ຮຽກຮ້ອງຕາມສິດຂອງພວກເຂົາບໍ ?.

### ຂອບເຂດການປະຕິບັດ ແລະ ການຕິດຕາມ ກວດກາ Compliance framework and monitoring

25. ທ່ານມີສະຖານທີ່ ຫຼື ນະໂຍບາຍ ຫຼື ການປະຕິບັດຈັນຍາບັນ/ກົດລະບຽບຢ່າງຊັດເຈນ ກ່ຽວກັບການຫ້າມທຸກຮູບແບບຂອງການຄ້າມະນຸດ ບໍ ?.

26. ທ່ານມີລະບົບການບໍລິຫານທີ່ມີປະສິດຕະພາບບໍ ເພື່ອສະໜັບສະໜູນການປະຕິບັດນະໂຍບາຍຕ້ານການຄ້າມະນຸດ ?.

27. ທ່ານຮັບຮູ້ ກ່ຽວກັບຂະບວນການ ສັນຍາຈ້າງງານຂອງຜູ້ຮັບເໝົາລາຍຍ່ອຍ ໃນບໍລິສັດຂອງທ່ານ ແລະ ຕ່ອງໂສ້ການສະໜອງ ບໍ

28. ທ່ານໄດ້ເຮັດການກວດກາ, ຄອບຄຸມ, ປະເມີນຕ່ອງໂສ້ການສະໜອງ ແລະ ຕິດຕາມສະພາບການຮັບສະມັກ ແລະ ການຈ້າງງານໃນລະບົບຕ່ອງໂສ້ຂອງການ ສະໜອງຂອງທ່ານເປັນປະຈຳບໍ, ລວມທັງຜູ້ຮັບເຫມົາລາຍຍ່ອຍ ?.

29. ທ່ານມີການຝຶກອົບຮົມຄວາມສ່ຽງ ແລະ ຮູບແບບຂອງການການຄ້າມະນຸດ, ນະໂຍບາຍ ແລະ ວິທີການຕ້ານການຄ້າມະນຸດ ໃຫ້ກັບພະນັກງານຝ່າຍບຸກຄົນ, ຜູ້ຮັບຜິດຊອບວຽກງານສັງຄົມ ແລະ ພະນັກງານຄົນອື່ນໆທີ່ກ່ຽວຂ້ອງບໍ ?

30. ກໍລະນີຂອງການຄ້າມະນຸດໄດ້ຖືກຄົ້ນພົບໃນລະບົບຕ່ອງໂສ້ການສະຫນອງຂອງທ່ານທີ່ມີຢູ່ບໍ, ແລະ ກ່ອນອື່ນໝົດລູກຈ້າງ(ຜູ້ອອກແຮງງານ) ຜູ້ທີ່ໄດ້ຮັບຜົນກະທົບໄດ້ຮັບການເອົາໃຈໃສ່ດີທີສຸດແລ້ວບໍ ກັບລະບົບກົນໄກການສົ່ງຕໍ່ທີ່ກະກຽມໃຫ້ ແລະ ການຈ່າຍຊົດເຊີຍຜູ້ຖືກເຄາະຮ້າຍ ?.

31. ທ່ານໄດ້ມີການກຳນົດກົນໄກທີ່ມີປະສິດຕິຜົນ ແລະ ໜ້າເຊື່ອຖື ພື່ອໃຫ້ລູກຈ້າງ(ຜູ້ອອກແຮງງານ) ໄດ້ໃຊ້ສຽງ/ຕຳນິວິຈານ ກ່ຽວກັບການຮັບສະມັກງານ, ສະພາບຕ່າງໆຂອງການຈ້າງງານ, ນະໂຍບາຍທີ່ປະກາດໃຊ້ ເພື່ອປ້ອງກັນຄວາມລັບຂອງພະນັກງານ ຜູ້ທີ່ບໍ່ປະສົງບອກຊື່ ບໍ ?.

32. ທ່ານມີການລາຍງານ ແລະ ຕິດຕໍ່ສື່ສານ, ເຜີຍແຜ່ ກັບສາທາລະນະຊົນ, ເພື່ອນຮ່ວມງານພາກສ່ວນອື່ນໆ ລວມທັງນັກລົງທຶນ ກ່ຽວກັບນະໂຍບາຍຂອງບໍລິສັດ, ແຜນງານ, ການປະຕິບັດ ແລະ ຜົນກະທົບຂອງການຕ້ານການຄ້າມະນຸດ ຢ່າງເປັນປົກກະຕິ ບໍ

33. ທ່ານໄດ້ປຸກລະດົມຂົນຂວາຍເພື່ອນຮ່ວມງານອື່ນໆ ເຂົ້າຮ່ວມ ແລະ ໃຫ້ພັນທະສັນຍາ, ຮ່ວມມືປະຕິບັດຕ້ານການຄ້າມະນຸດບໍ ?.

34. ທ່ານໄດ້ປຸກລະດົມຂົນຂວາຍ ລັດຖະບານ ແລະ ນັກສະແດງ, ຜູ້ມີຊື່ສຽງ ໃນສາທາລະນະຊົນລວມທັງອົງການຈັດຕັ້ງສາກົນ ເຂົ້າຮ່ວມສະໜັບສະໜູນໃຫ້ມີການປະຕິບັດລະບຽບກົດໝາຍ ແລະ ນະໂຍບາຍທີ່ເຄັ່ງຄັດ ເພື່ອຊຸກຍູ້ມາດຕະການຕໍ່ຕ້ານການຄ້າມະນຸດບໍ ?.